ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຫະກອນອອມຊັບ-ສິນເຊື່ອ ອທອ

ເລກທີ 246/ສອສ.ອທອ

ວັນທີ 06 DEC 2023

# ບົດບັນທຶກ

ກອງປະຊຸມປຶກສາຫາລື ກ່ຽວກັບການແກ້ໄຂບັນຫາ ເງິນກູ້ຂອງສະມາຊິກ ແລະ ປັບປຸງລະບຽບໃໝ່ຕາມຄຳເຫັນ ຄະນະສະພາບໍລິຫານ ສອສ ຄັ້ງວັນທີ 23/11/2023.

**1. ການຈັດຕັ້ງ:**

- ສະຖານທີ່: ຫ້ອງປະຊຸມ ສອສ ຊັ້ນ 5 ຕຶກ ອທອ ສູນກາງ
- ເວລາ: 14:30– 16:00 , ວັນທີ 01 ທັນວາ 2023
- ຜູ້ເຂົ້າຮ່ວມ: ຄະນະອຳນວຍການ ສອສ 4 ທ່ານ, ຄະນະກວດກາ 1 ທ່ານ ໂດຍ ຄະນະອຳນວຍການ ທ່ານ ໄຊສົມໝາຍ ສໍສຳພັນໄຊ ເປັນປະທານກອງປະຊຸມ.

**2. ຈຸດປະສົງຂອງກອງປະຊຸມ:**

- ປຶກສາຫາລື ກ່ຽວກັບການແກ້ໄຂບັນຫາ ເງິນກູ້ຂອງສະມາຊິກ ແລະ ປັບປຸງລະບຽບໃໝ່ຕາມຄຳເຫັນ ຄະນະສະພາບໍລິຫານ ສອສ ຄັ້ງວັນທີ 23/11/2023.
  1. ປັບປຸງລະບຽບໃໝ່ຕາມຄຳເຫັນ ຄະນະສະພາບໍລິຫານ ສອສ ຄັ້ງວັນທີ 23/11/2023
  2. ການແກ້ໄຂບັນຫາ ການຕັດເງິນກູ້ຢືມຂອງສະມາຊິກບໍ່ຖືກ.
  3. ການຖອນຮຸ້ນປະຈຳປີ 2023.

4. **ຜົນຂອງກອງປະຊຸມໄດ້ເອກະພາບຮັບຮອງເອົາບັນຫາດັ່ງລຸ່ມນີ້:**
   1. ມອບໃຫ້ໜ່ວຍງານ ກວດກາ ປັບປຸງ ແລະ ເພີ້ມບາງມາດຕາ ຂອງຮ່າງລະບຽບໃໝ່ ຕາມການສະເໜີຄະນະສະພາບໍລິຫານ ສອສ.
   2. ການແກ້ໄຂບັນຫາ ການຕັດເງິນກູ້ຢືມຂອງສະມາຊິກ ບໍ່ຖືກແມ່ນປະຕິບັດດັ່ງລຸ່ມນີ້:
      - ມອບໃຫ້ໜ່ວຍງານສິນເຊື່ອ ກວດຄືນ 475 ສັນຍາ ວ່າຄິດໄລ່ດອກເບ້ຍ ປະຈຳເດືອນ 11/2023 ຖືກຕາມສັນຍາແລ້ວບໍ່ ພ້ອມທັງແຈ້ງການໃຫ້ສະມາຊິກຮັບຊາບ.
      - ເຫັນດີ ຍຶດເອົາຕົວເລກຕົ້ນທຶນຢູ່ໃນ ໂປຣແກຣມ MB Win ເປັນຫຼັກ. ສຳລັບສັນຍາທີ່ມີສ່ວນຕ່າງລະຫວ່າງຕົ້ນທຶນເກົ່າ ແລະ ຕົ້ນທຶນໃໝ່ ປະມານໜຶ່ງຮ້ອຍກວ່າສັນຍາ ແມ່ນມອບໃຫ້ ໜ່ວຍງານສິນເຊື່ອສະຫລຸບແລະ ເຮັດແຈ້ງການໃຫ້ສະມາຊິກຮັບຊາບ.
      - ສຳລັບຕົ້ນທຶນເງິນກູ້ ປະຈຳເດືອນ 09 ຫາ ເດືອນ11/2023 ທີ່ໄດ້ຕັດຕົ້ນທຶນ ຕາມເລກທີສັນຍາເກົ່າ ສ່ວນຕ່າງແມ່ນໃຫ້ ລົງບັນຊີເປັນລາຍຮັບລ່ວງໜ້າໄວ້ ແລ້ວດັດແກ້ສ່ວນດັ່ງກ່າວໃນເດືອນ 12/2023.
      - ເຫັນດີປັບປຸງສັນຍາເງິນກູ້ຢືມຂອງ ທ້າວ ພູວົງ ລາດຊະວົງ ຄືນ ເນື່ອງຈາກການຄີ້ຂໍ້ມູນຍອດຍົກມາຂອງຕົ້ນທຶນມີການປ່ຽນແປງ ໃຫ້ປັບປຸງໃຫ້ໃກ້ຄຽງຕົ້ນທຶນຕາມສັນຍາເກົ່າ.

3. ມອບໃຫ້ໜ່ວຍງານບໍລິຫານຮ່າງແຈ້ງການປ່ຽນແປງຮຸ້ນ (ຖອນຮຸ້ນ, ເພີ່ມຮຸ້ນ, ຫຼຸດຮຸ້ນ) ຂອງສະມາຊິກປະຈໍາປີ 2023 ເລີ່ມແຕ່ ວັນທີ 18-25/12/2023.

ຄະນະອໍານວຍການ ສອສ

1. ທ່ານ ໄຊສົມໝາຍ ສໍສໍາພັນໄຊ.................................

2. ທ່ານ ນາງ ມະນີຄໍາ ພິມມະສານ.................................

3. ທ່ານ ນາງ ຈັນພອນ ພາລະໂກສົນ.................................

4. ທ່ານ ພຸດໄລ ວົງໄຊ.................................

ຄະນະກວດກາ

1. ທ່ານ ໄຊຍະວົງ ສີຈະເລີນ.................................